ວັນທີ: 4 ພຶດສະພາ 2017

ເລື່ອງ: ກົດລະບຽບວ່າດ້ວຍການສ້າງພູມຕ້ານທານໃນໂຮງຮຽນ

ພະແນກສາທາລະນະສຸກຂອງລັດເພັນຊິນວາເນຍໄດ້ອອກກົດລະບຽບວ່າດ້ວຍການສ້າງພູມຕ້ານທານໃນໂຮງຮຽນສະບັບໃໝ່. ການປັບປຸງກົດລະບຽບເຫຼົ່ານີ້ແມ່ນມີຜົນນຳໃຊ້ນັບແຕ່ເດືອນສິງຫາ 2017 ເປັນຕົ້ນໄປ ແລະ ຈະມີຜົນກະທົບຕໍ່ນັກຮຽນໃນໂຮງຮຽນໂຮສະກູນຂອງພວກເຮົາທຸກຄົນ. ໃນຂະນະທີ່ນັກຮຽນຂອງພວກເຮົາຫຼາຍຄົນມີການສ້າງພູມຕ້ານທານຕາມທີ່ຕ້ອງການມາໃໝ່ໆແລ້ວ, ແຕ່ຫຼາຍຄົນແມ່ນຍັງຈະຕ້ອງໄດ້ສັກເພີ່ມອີກ. ເງື່ອນໄຂກຳນົດໃໝ່ແມ່ນກຳນົດໄວ້ຢູ່ລຸ່ມນີ້ຄື:

ນັກຮຽນຢູ່ໃນ**ທຸກ**ເກຣດຕ້ອງໄດ້:

- ສັກຢາກັນບາດທະຍັກ, ຄໍຕີບ, ແລະ ໄອກໄອໂກນ (acellular pertussis) 4 ເຂັມ, 1 ເຂັມຫຼັງຈາກມີອາຍຸຄົບຮອບ 4 ປີ
- ສັກຢາກັນໂປລີໂອ 4 ເຂັມ, 1 ເຂັມຫຼັງຈາກມີອາຍຸຄົບຮອບ 4 ປີ
- ສັກຢາກັນໝາກແດງ, ກັນໝາກເບີດ ແລະ ພະຍາດໝາກແດງນ້ອຍ (MMR) 2 ເຂັມ, ທັງສອງເຂັມແມ່ນຕ້ອງຫຼັງຈາກມີອາຍຸຄົບຮອບ 1 ປີ
- ສັກຢາກັນພະຍາດໝາກສຸກໝາກໃສ ຫຼື ຫຼັກຖານຂອງພູມຕ້ານທານ 2 ເຂັມ, ທັງສອງເຂັມແມ່ນຕ້ອງຫຼັງຈາກມີອາຍຸຄົບຮອບ 1 ປີ
- ກັນໄວຣັດຕັບອັກເສບ B 3 ເຂັມ

ເງື່ອນໄຂກຳນົດການສ້າງພູມຕ້ານທານເພີ່ມເຕີມສຳລັບ**ເກຣດທີ 7 ເຖິງເກຣດທີ 12**:

- ເຍື່ອຫຸ້ມສະໝອງອັກເສບ (MCV) 2 ເຂັມ, ເຂັມທຳອິດແມ່ນຕອນອາຍຸ 11-15 ປີ ແລະ ເຂັມທີສອງແມ່ນຕອນອາຍຸ 16 ປີ ຫຼື ເລີ່ມເຂົ້າຮຽນເກຣດທີ 12. ຖ້າສັກເຂັມທຳອິດຕອນອາຍຸ 16 ປີ ຫຼື ຫຼັງຈາກນັ້ນ, ແມ່ນໃຫ້ສັກແຕ່ເຂັມດຽວ
- ກັນບາດທະຍັກ, ຄໍຕີບ, ແລະ ໄອກໄອໂກນ 1 ເຂັມ

ຄາດໝາຍໄວ້ວ່າ ນັກຮຽນທຸກຄົນຈະຕ້ອງສັກຢາກັນພະຍາດເຫຼົ່ານີ້ໃຫ້ຄົບໃນມື້ເປີດສົກຮຽນປີ 2017/18 ຫຼື ຈະຢູ່ພາຍໃຕ້ການເບິ່ງແຍງດູແລຂອງແພດຕາມແຜນ ເພື່ອສັກໃຫ້ຄົບ. ເມື່ອທ່ານກັບມາໂຮງຮຽນໃນລະດູໃບໄມ້ຫຼົ່ນ, ກະລຸນາເອົາສຳເນົາບັນທຶກການສັກຢາທີ່ໄດ້ອັບເດດແລ້ວນັ້ນໃຫ້ພະຍາບານສະບັບໜຶ່ງ.